ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 228 /ລບ

ນະຄອນຫລວງວຽງຈັນ, ວັນທີ 31.5.2012

# ດຳລັດ
## ວ່າດ້ວຍການກັນ ແລະ ຄວບຄຸມພະຍາດສັດ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ ສະບັບປັບປຸງເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003;
- ອີງຕາມ ກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ ສະບັບເລກທີ 03/ສພຊ, ລົງວັນທີ 25 ກໍລະກົດ 2008;
- ອີງຕາມ ມະຕິກອງປະຊຸມລັດຖະບານ ປະຈຳເດືອນ ພະຈິກ 2012 ສະບັບເລກທີ 10/ລບ, ລົງວັນທີ 23/12/2011;
- ອີງຕາມ ໜັງສືສະເໜີຂອງລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 0765/ກປ ລົງວັນທີ 21 ພຶດສະພາ 2012.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫລັກການ, ລະບຽບການ, ມາດຕະການ ແລະ ວິທີການກ່ຽວກັບການກັນ ແລະ ຄວບຄຸມພະຍາດສັດ ເພື່ອສະກັດກັ້ນ, ຈຳກັດ ແລະ ກ້າວໄປສູ່ການລົບລ້າງພະຍາດລະບາດສັດ ແນໃສ່ບໍ່ໃຫ້ມີການລະບາດຢູ່ດິນແດນ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຮັບປະກັນເຮັດໃຫ້ສັດລ້ຽງມີສຸຂະພາບແຂງແຮງ ໃຫ້ຜົນຜະລິດສູງ, ມີຄວາມປອດໄພຕໍ່ຜູ້ບໍລິໂພກ ລວມທັງບໍ່ສ້າງຄວາມເສຍຫາຍ ຕໍ່ເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມຂອງຊາດ.

### ມາດຕາ 2. ການກັນ ແລະ ຄວບຄຸມພະຍາດສັດ

ການກັນພະຍາດສັດ ແມ່ນການນຳໃຊ້ວິທີການກັນພະຍາດ ໃນສະຖານທີ່ລ້ຽງສັດໃດໜຶ່ງ ເພື່ອກັນ ຫລື ຫລຸດຜ່ອນປັດໃຈສ່ຽງກ່ອນການເກີດພະຍາດສັດ ແນໃສ່ຮັບປະກັນບໍ່ໃຫ້ສັດເປັນພະຍາດ ທີ່ຈະສ້າງຄວາມເສຍຫາຍຕໍ່ການລ້ຽງສັດ ແລະ ຜູ້ບໍລິໂພກ.

ການຄວບຄຸມພະຍາດສັດ ແມ່ນການນໍາໃຊ້ມາດຕະການຄວບຄຸມພະຍາດ ໃນສະຖານທີ່ລ້ຽງສັດ ຫລື ຂອບເຂດທີ່ກໍານົດຂຶ້ນໃດໜຶ່ງ ເພື່ອຈໍາກັດ ແລະ ທໍາລາຍພະຍາດສັດ ທີ່ເກີດຂຶ້ນແລ້ວ ໃຫ້ສະຫງົບ ແລະ ກັບຄືນສູ່ສະພາບປົກກະຕິ ລວມທັງການປິ່ນປົວ, ການນໍາໃຊ້ມາດຕະການດ້ານບໍລິຫານ ແລະ ແຜນການຄວບຄຸມສຸກເສີນ ຫລື ແຜນການລົບລ້າງພະຍາດສັດໃດໜຶ່ງ ເພື່ອບໍ່ໃຫ້ມີ ຫລື ເກີດມີພະຍາດສັດ ໃນ ສປປ ລາວ.

**ມາດຕາ 3. ການອະທິບາຍຄໍາສັບ**

ຄໍາສັບທີ່ໃຊ້ໃນດໍາລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ພະຍາດສັດ** ໝາຍເຖິງ ການສະແດງອາການ ຫລື ຮ່ອງຮອຍ ຫລື ການເຮັດໜ້າທີ່ຂອງອະໄວຍະວະ, ພາກສ່ວນໃດໜຶ່ງ ຫລື ລະບົບໃດໜຶ່ງຂອງຮ່າງກາຍສັດຜິດປົກກະຕິ ຊຶ່ງປະກອບດ້ວຍ: ພະຍາດລະບາດສັດ ແລະ ພະຍາດສັດທີ່ບໍ່ລະບາດ;
2. **ພະຍາດລະບາດສັດ** ໝາຍເຖິງ ພະຍາດສັດທີ່ສາມາດຕິດຕໍ່ຈາກສັດສູ່ສັດ ແລະ ຈາກສັດສູ່ຄົນ ຕາມທີ່ກໍານົດໄວ້ໃນມາດຕາ 40 ຂອງກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ;
3. **ພະຍາດສັດທີ່ບໍ່ລະບາດ** ໝາຍເຖິງ ພະຍາດທີ່ບໍ່ສາມາດຕິດຕໍ່ຈາກສັດສູ່ສັດ ແລະ ຈາກສັດສູ່ຄົນ;
4. **ສະຖານທີ່ລ້ຽງສັດ** ໝາຍເຖິງ ຄັງ, ຟາມ, ຄອກ ຫລື ສະຖານທີ່ອື່ນ ທີ່ນໍາໃຊ້ສໍາລັບລ້ຽງສັດ;
5. **ພາຫະນໍາເຊື້ອພະຍາດ** ໝາຍເຖິງ ຄົນ, ສັດທີ່ມີມີກະດູກສັນຫລັງ, ສັດທີ່ບໍ່ມີກະດູກສັນຫລັງ, ພາຫະນະ ຂົນສົ່ງ ແລະ ວັດຖຸຕ່າງໆ ທີ່ສາມາດນໍາເຊື້ອພະຍາດ;
6. **ສັດທີ່ສົງໄສວ່າຕິດພະຍາດລະບາດສັດ** ໝາຍເຖິງ ສັດທີ່ໄດ້ສໍາພັດກັບສັດທີ່ເຈັບ ຫລື ຕາຍຍ້ອນພະຍາດລະບາດສັດ ຫລື ພົວພັນກັບພາຫະນໍາເຊື້ອພະຍາດ;
7. **ການຢັ້ງຢືນການເກີດພະຍາດ** ໝາຍເຖິງ ການແຈ້ງການ ຢ່າງເປັນທາງການ ຂອງອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ກ່ຽວກັບການພົບເຊື້ອທີ່ເປັນສາເຫດ ຂອງພະຍາດ ໂດຍອີງຕາມຜົນຂອງການບົ່ງມະຕິ ຈາກຫ້ອງວິໄຈພະຍາດສັດທີ່ຮັບຮູ້ຢ່າງເປັນທາງການ ຂອງອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ;
8. **ການນໍາໃຊ້ມາດຕະການ** ໝາຍເຖິງ ການກໍານົດ ແລະ ນໍາໃຊ້ນິຕິກໍາ, ມາດຕະຖານ, ຂັ້ນຕອນປະຕິບັດ ເພື່ອກັນ ຫລື ຄວບຄຸມພະຍາດສັດ;
9. **ພະຍາດສັດຕ່າງຖິ່ນ** ໝາຍເຖິງ ພະຍາດສັດໃດໜຶ່ງ ທີ່ເກີດຢູ່ປະເທດອື່ນ ຊຶ່ງບໍ່ເຄີຍເກີດຂຶ້ນ ຫລື ບໍ່ມີໃນ ສ ປປ ລາວ;
10. **ເຂດປອດພະຍາດສັດ** ໝາຍເຖິງ ຂອບເຂດໃດໜຶ່ງ ທີ່ມີການກໍານົດ ຢ່າງຊັດເຈນ ຢູ່ພາຍໃນປະເທດ ແລະ ມີການປະກາດ ຢ່າງເປັນທາງການວ່າ ເປັນເຂດທີ່ບໍ່ມີ ຫລື ບໍ່ເກີດພະຍາດສັດໃດໜຶ່ງ ໃນໄລຍະເວລາທີ່ແນ່ນອນໃດໜຶ່ງ ຕາມມາດຕະຖານຂອງອົງການພະຍຸສັດສາກົນ. ເຂດດັ່ງກ່າວ ຕ້ອງມີການນໍາໃຊ້ມາດຕະການດ້ານສັດຕະວະແພດ ຢ່າງມີປະສິດທິພາບ ແລະ ເຂັ້ມງວດ ເພື່ອຄວບຄຸມການ ລ້ຽງສັດ ແລະ ການນໍາໃຊ້ຜະລິດຕະພັນສັດ ລວມທັງການຂົນສົ່ງຜະລິດຕະພັນສິນຄ້າກ່ຽວກັບສັດ ແນໃສ່ຮັບປະກັນບໍ່ໃຫ້ມີພະຍາດສັດເກີດຂຶ້ນ ຢູ່ໃນເຂດດັ່ງກ່າວ;